## ບົດປະກອບຄໍາເຫັນ ຂອງ ກະຊວງການເງິນ

- ຮຽນ ທ່ານ ປອ ດຣ. ບຸນແຝງ ພູມມະໄລສິດ, ລັດຖະມົນຕີກະຊວງສາທາລະນະສຸກ, ຮອງປະທານຄະນະ ກໍາມະການແຫ່ງຊາດດ້ານໂພຊະນາການ, ທີ່ເຄົາລົບແລະ ນັບຖື ຢ່າງສູງ
- ຮຽນ ທ່ານ ນາງ ອີນາ ມາຈູລໍນິແຕ, ເອກອັກຄະລັດຖະທູດ ສະຫະພາບເອີຣົບ ປະຈໍາ ສປປ ລາວ;
- ຮຽນ ບັນດາທ່ານຜູ້ມີກຽດ ແລະ ທ່ານຍິງທ່ານຊາຍທີ່ເຄົາລົບ

ກ່ອນອື່ນ ຂ້າພະເຈົ້າ ຂໍອະໄພທີ່ ຄະນະນໍາກະຊວງການເງິນ ບໍ່ສາມາດເຂົ້າຮ່ວມ ກປຊ ໄດ້ ແລະ ໄດ້ມອບໝາຍໃຫ້ຂ້າພະເຈົ້າເຂົ້າຮ່ວມ ແລະ ລາຍງານ ຄວາມຄືບໜ້າ ບັນດາວຽກງານທີ່ຕິດພັນກັບ ກະຊວງການເງິນ ໃນການຈັດຕັ້ງປະຕິບັດ ແຜນການດໍາເນີນງານແຫ່ງຊາດດ້ານໂພຊະນາການ.

ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍມາຍັງບັນດາກະຊວງທີ່ກ່ຽວຂ້ອງ ແລະ ບັນດາແຂວງ ທີ່ໄດ້ນໍາພາ-ຊີ້ນໍາ ແລະ ປະສານສົມທົບໃນການລະດົມທຶນເຂົ້າໃນການຈັດຕັ້ງປະຕິບັດວຽກງານໂພຊະນາການແຫ່ງຊາດ. ຂໍສະແດງຄວາມຂອບໃຈບັນດາຜູ້ໃຫ້ທຶນ ທີ່ໃຫ້ການສະໜັບສະໜູນ ການຊ່ວຍເຫຼືອຫຼາຍຮູບແບບ ໃນວຽກງານໂພຊະນາການຢູ່ ສປປ ລາວ.

ຂໍສະແດງຄວາມຂອບໃຈ ແລະ ເປັນເອກະພາບ ຕໍ່ກັບບົດລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວຽກງານຍຸດທະສາດແຫ່ງຊາດດ້ານໂພຊະນາການປະຈໍາປີ 2023 ແລະ ແຜນການປີ 2024 ທີ່ ທ່ານ ລັດຖະມົນຕີກະຊວງສາທາລະນະສຸກ, ຮອງປະທານຄະນະກໍາມະການແຫ່ງຊາດດ້ານໂພຊະນາການ ໄດ້ລາຍງານຕໍ່ກອງປະຊຸມ.

ໃນປີ 2023, ກະຊວງການເງິນ ໄດ້ປະຕິບັດ ຄໍາໝັ້ນສັນຍາ ທີ່ໄດ້ແຈ້ງໃນກອງປະຊຸມ ແຫ່ງຊາດດ້ານໂພຊະນາການຄັ້ງທີ 8 ໃນວັນທີ 21 ກຸມພາ 2023, ເຊິ່ງໄດ້ສໍາເລັດໜ້າວຽກດັ່ງນີ້:

1. ໄດ້ຮັບຮອງ ດໍາລັດວ່າດ້ວຍການສ້າງແຜນງົບປະມານແຫ່ງລັດ ສະບັບເລກທີ 254/ລບ, ລົງວັນທີ 18 ສິງຫາ 2023;
2. ໄດ້ສົມທົບກັບຊ່ຽວຊານ ຈາກ ສະຫະພາບເອີຣົບ, ທະນາຄານໂລກ ແລະ ຂະແໜງການກ່ຽວຂ້ອງ ເພື່ອໄຈ້ແຍກວຽກໂພຊະນາການ ໃຫ້ບັນຈຸໃນສາລະບານບັນຊີ-ງົບປະມານ (COA). ສະເພາະໃນໄລຍະສັ້ນ ແມ່ນຈະໄດ້ແຍກລາຍຈ່າຍວຽກງານໂພຊະນາການເຂົ້າໃນອົງປະກອບແຫຼ່ງທຶນ ເພື່ອສະດວກໃນການຕິດຕາມການນໍາໃຊ້ທຶນ. ສໍາລັບໄລຍະຍາວ ແມ່ນຈະກໍານົດແຜນງານໂພຊະນາການ ເຂົ້າໃນອົງປະກອບແຜນງານ ທີ່ເພີ່ມເຂົ້າໃໝ່ໃນລະບົບ ຄຸ້ມຄອງຂໍ້ມູນຂ່າວສານການເງິນ (FMIS);
3. ໄດ້ປັບປຸງຂໍ້ຕົກລົງວ່າດ້ວຍ ລະບຽບການຄຸ້ມຄອງການເງິນ ສໍາລັບທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ຊກພ) ສະບັບເລກທີ 2695/ກງ, ລົງວັນທີ 1 ພະຈິກ 2010, ເຊິ່ງຄາດວ່າຈະຮັບຮອງ ໃນງວດ 1 ປີ 2024;
4. ໄດ້ເບີກຖອນເງິນຊ່ວຍເຫຼືອລ້າ ມູນຄ່າ ຈໍານວນ 16,1 ລ້ານ ເອີໂຣ ຈາກ ສະຫະພາບເອີຣົບ ຂອງແຜນງານດັດແກ້ມະຫາພາກ ເພື່ອຄໍ້າປະກັນງົບປະມານ ສໍາລັບການຈັດຕັ້ງປະຕິບັດແຜນງານໂພຊະນາການ (EU Budget Support for Nutrition)
5. ໄດ້ເຈລະຈາ ແລະ ເຊັນສັນຍາເງິນກູ້ ມູນຄ່າ 37 ລ້ານ ໂດລາ ສຫລ ຈາກ ທະນາຄານໂລກ ສໍາລັບ ໂຄງການຫຼຸດຜ່ອນຄວາມທຸກຍາກ ແລະ ການຂາດໂພຊະນາການໃນເຂດຊົນນະບົດ ໄລຍະ II (Reducing Rural Poverty and Malnutrition Project Phase II); ແລະ ສັນຍາເງິນກູ້ ມູນຄ່າ 62 ລ້ານ ໂດລາ ສຫລ ຈາກທະນາຄານໂລກ ສໍາລັບ ໂຄງການເຂົ້າເຖິງການບໍລິການສາທາລະນະສຸກ ແລະ ໂພຊະນາການ ໄລຍະ 2 (Health and Nutrition Services Access Project II - HANSA II).

6. ໄດ້ເຂົ້າຮ່ວມກອງປະຊຸມ ກອງເລຂາຄະນະກຳມະການແຫ່ງຊາດ ດ້ານໂພຊະນາການ ແຕ່ລະໄຕມາດ, ພ້ອມທັງ ເປັນເຈົ້າພາບ ຈັດກອງປະຊຸມ ຄະນະປະຕິບັດງານດ້ານວິຊາການ ໂຄງການ TANPAN (ການຊ່ວຍເຫຼືອລ້າດ້ານວິຊາການ) ທີ່ໄດ້ຮັບການສະໜັບສະໜູນ ຈາກ ສະຫະພາບເອີຣົບ ເພື່ອຈັດຕັ້ງປະຕິບັດແຜນການປະຕິບັດງານແຫ່ງຊາດດ້ານໂພຊະນາການ (NPAN) ປີ 2021-2025). ໄດ້ເຂົ້າຮ່ວມການແລກປ່ຽນບົດຮຽນ ກ່ຽວກັບ ການຄຸ້ມຄອງການເງິນແຫ່ງລັດ ຕິດພັນກັບວຽກງານໂພຊະນາການ ແລະ ນະໂຍບາຍ ຄວາມໝັ້ນຄົງດ້ານອາຫານ ແລະ ໂພຊະນາການ.

**ຮຽນບັນດາທ່ານທີ່ເຄົາລົບ**

ສຳລັບປີ 2024 ກະຊວງການເງິນ ຂໍໃຫ້ຄຳໝັ້ນສັນຍາ ຄື:

1. ສ້າງປຶ້ມຄູ່ມື ວ່າດ້ວຍການຈັດຕັ້ງປະຕິບັດ ດຳລັດວ່າດ້ວຍການສ້າງແຜນງົບປະມານແຫ່ງລັດ ສະບັບເລກທີ 254/ລບ, ລົງວັນທີ 18 ສິງຫາ 2023 ເພື່ອເປັນບ່ອນອີງໃຫ້ບັນດາກະຊວງ, ຂະແໜງການ ໃນການຂຶ້ນແຜນລາຍຈ່າຍງົບປະມານ ສ່ອງແສງໃຫ້ເຫັນຕົວເລກງົບປະມານນຳໃຊ້ສະເພາະເຂົ້າໃນວຽກງານໂພຊະນາການ ແລະ ເປັນບ່ອນອີງໃນການກວດກາຫຼັງການຈ່າຍ ເພື່ອສາມາດຕິດຕາມການນຳໃຊ້ງົບປະມານພາຍໃນ ແລະ ທຶນ ຊກພ ເຂົ້າໃນວຽກງານໂພຊະນາການຢ່າງມີປະສິດທິຜົນ;
2. ສືບຕໍ່ປັບປຸງ ສາລະບານບັນຊີ-ງົບປະມານ ເພື່ອນຳໃຊ້ເຂົ້າໃນລະບົບຄຸ້ມຄອງຂໍ້ມູນຂ່າວສານການເງິນ (FMIS), ພ້ອມທັງສ້າງຄຳແນະນຳ ການລົງບັນຊີອີງປະກອບແຫຼ່ງທຶນວຽກງານໂພຊະນາການ ເພື່ອເຜີຍແຜ່ໃຫ້ຫົວໜ່ວຍງົບປະມານຂັ້ນສູນກາງຮອດທ້ອງຖິ່ນ;
3. ສືບຕໍ່ຊຸກຍູ້ບັນດາຂະແໜງການ ໄຈ້ແຍກໃຫ້ເຫັນຢ່າງຈະແຈ້ງ ກ່ຽວກັບ ລາຍຈ່າຍທີ່ຕິດພັນກັບວຽກງານໂພຊະນາການ, ເນື່ອງຈາກເປັນວຽກງານທີ່ຕິດພັນກັບຫຼາຍຂະແໜງການ, ເຊິ່ງຜ່ານມາບໍ່ໄດ້ສ່ອງແສງໂດຍກົງ ຢູ່ໃນແຜນລາຍຈ່າຍງົບປະມານລວມ;
4. ສືບຕໍ່ປະສານສົມທົບກັບກະຊວງແຜນການ ແລະ ການລົງທຶນ, ຂະແໜງການກ່ຽວຂ້ອງ, ບັນດາຜູ້ໃຫ້ທຶນ ເພື່ອຂົນຂວາຍທຶນສຳລັບວຽກງານໂພຊະນາການ. ພ້ອມທັງ ສ້າງຄວາມເຂັ້ມແຂງໃຫ້ໜ່ວຍງານຈັດຕັ້ງປະຕິບັດ ກ່ຽວກັບ ການກວດກາ ຕິດຕາມ ຊຸກຍູ້ ແລະ ເພີ່ມທະວີການສ້າງແຜນ, ການຈັດສັນ ແລະ ນຳໃຊ້ງົບປະມານ ດຳເນີນໄປຢ່າງໂລ່ງລ່ຽນ ແລະ ເກີດປະໂຫຍດສູງສຸດ;
5. ສືບຕໍ່ພັດທະນາ ແລະ ນຳໃຊ້ລະບົບການວິເຄາະການເງິນ ແລະ ຄຸ້ມຄອງໜີ້ສິນ (Debt Management and Financial Analysis System – DMFAS) ເພື່ອຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດ, ການນຳໃຊ້ທຶນ ຊກພ ແລະ ໂຄງການ ທີ່ຜ່ານກະຊວງການເງິນ ຢ່າງໃກ້ຊິດ ແລະ ມີຄວາມຊັດເຈນ, ພ້ອມທັງປະສານສົມທົບກັບກະຊວງແຜນການ ແລະ ການລົງທຶນ, ກະຊວງການຕ່າງປະເທດ ເພື່ອຕິດຕາມຕົວເລກ ຊກພ ໂດຍສະເພາະຈະໄດ້ລົງເລິກຕື່ມ ສຳລັບວຽກງານໂພຊະນາການທີ່ບໍ່ເບີກຈ່າຍຜ່ານກະຊວງການເງິນ;
6. ເຜີຍແຜ່ ຂໍ້ຕົກລົງວ່າດ້ວຍ ລະບຽບການຄຸ້ມຄອງການເງິນ ສຳລັບທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ຊກພ) ສະບັບປັບປຸງ ພາຍຫຼັງຖືກຮັບຮອງແລ້ວ ໃຫ້ແກ່ກະຊວງ ແລະ ຂະແໜງການກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ.

ທ້າຍນີ້, ຂ້າພະເຈົ້າຂໍອວຍພອນປະທານກອງປະຊຸມ, ບັນດາທ່ານລັດຖະມົນຕີ, ຮອງລັດຖະມົນຕີ, ຮອງເຈົ້າແຂວງ, ຄູ່ຮ່ວມພັດທະນາ ແລະ ບັນດາທ່ານທີ່ມີກຽດ ແລະ ເຄົາລົບ ທີ່ເຂົ້າຮ່ວມກອງປະຊຸມມື້ນີ້ ຈົ່ງມີສຸຂະພາບເຂັ້ມແຂງ, ປະສົບຜົນສຳເລັດໃນໜ້າທີ່ວຽກງານທຸກປະການ.

**ຂໍຂອບໃຈ**